ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບໄລຍະ 9 ເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ກັນຍາ 2019

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1-3
ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ	4
ໃບລາຍງານຖານະການເງິນ	5
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	6
ໃບລາຍງານກະແສເງິນສົດ	7

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນບໍລິສັດທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ຕາມໃບທະບຽນວິສາຫະກິດ ເລກທີ 1169/ຈທອ, ລົງ ວັນທີ 30 ພະຈິກ 2017 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສ້າເລັດການສະເໜີຂາຍຮຸ້ນອອກໃໝ່ໃຫ້ແກ່ສາທາລະນະຊົນ ຊຶ່ງໄດ້ສະເໜີຂາຍຈຳນວນ 51,199,900 ຮຸ້ນ, ລາຄາໜ້າໃບຮຸ້ນ1,000 ກີບ ແລະ ລາຄາຂາຍຮຸ້ນລະ 1,050 ກີບ. ສະນັ້ນ, ບໍລິສັດໄດ້ຮັບ ໃບຢັ້ງຢືນການສ້າເລັດສະເໜີຂາຍຮຸ້ນອອກໃໝ່ໃຫ້ແກ່ສາທາລະນະຊົນ ເລກທີ 0006/ສຄຫຼວ ລົງວັນທີ 29 ພຶດສະພາ 2019 ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ ແລະ ໃບອະນຸຍາດດ່ຳເນີນທຸລະກິດ ເລກທີ 0833/ກຄກ ລົງວັນທີ 29 ພຶດສະພາ 2019 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະ ກຳ ແລະ ການຄ້າ ຂອງ ສປປ ລາວ. ຫຼັງຈາກການສະເໜີຂາຍຮຸ້ນອອກໃໝ່ໃຫ້ແກ່ສາທາລະນະຊົນ, ຮຸ້ນທັ້ງໝົດ ຂອງບໍລິສັດເວລາມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL")ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫລາດ ຫລັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເພື່ອພັດທະນາ ແລະ ເພື່ອໃຫ້ເຊົ່າ ປະເພດສູນການຄ້າ ແລະ ຫ້ອງການ. ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ຄະນະອຳນວຍການ

ສະມາຊິກຂອງຄະນະອຳນວຍການພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ Wei Hua	ປະທານ
ທ່ານ ນາງ Orlathai Santikhongkha	ຮອງປະທານ
ທ່ານ Liu Guangcan	ສະມາຊິກ
ທ່ານ Boulapha Santikhongkha	ສະມາຊິກ
ທ່ານ Chai Jianhong	ສະມາຊິກ
ທ່ານ Li Xiaodong	ສະມາຊິກ
ທ່ານ Wuxinghua	ສະມາຊິກ
ທ່ານ Xiao Yong	ສະມາຊິກ
ທ່ານ ນາງ Deng Yu	ສະມາຊິກ
ທ່ານ Lu Jian	ສະມາຊິກ
ທ່ານ Viengsavanh Phanthaly	ສະມາຊິກ

ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ Li Xiaodong	ຜູ້ອຳນວຍການໃຫຍ່
ທ່ານ Sun Fei Hu	ຜູ້ອຳນວຍການ
ທ່ານ Miao Zhen Wu	ຜູ້ອຳນວຍການ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)
ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*
ທ່ານ Xiao Yong	ຫົວໜ້າ
ທ່ານ ນາງ Deng Yu	ສະມາຊິກ
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ

ຕົວແທນທາງດ້ານກົດໝາຍ

ຕົວແທນທາງກົດໝາຍຂອງບໍລິສັດພາຍໃນໄລຍະ ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ Li Xiaodong, ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັ ລາວ ຈຳກັດ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຄະນະບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ມີຄວາມຍິນດີສະເໜີບົດລາຍງານ ແລະ ເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບໄລຍະເວລາສິ້ນສຸດຫົກເດືອນ 30 ກັນຍາ 2019.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນສຳລັບໄລຍະເວລາຫົກເດືອນຕົ້ນປີຂອງແຕ່ລະໄລຍະໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳ ສຳລັບໃບລາຍງານຖານະການເງິນໄລຍະເວລາຫົກເດືອນຕົ້ນປີຂອງບໍລິສັດ ແລະ ຜົນໄດ້ຮັບ ແລະ ກະແສເງິນສົດໄລຍະເວລາຫົກເດືອນຕົ້ນປີ. ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົານັບດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ປັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງ ໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານໄດ້ເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ ; ແລະ
- ກະກຽມເອກະສານລາຍງານການເງິນສຳລັບຫົກເດືອນຕົ້ນປີ ບົນພື້ນຖານຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະ ນີທີ່ ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ຮັບປະກັນວ່າ ບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງເຖິງຄວາມຖືກຕ້ອງຢູ່ຕະຫຼອດເວລາ ທາງດ້ານສະຖານະການເງິນຂອງບໍລິສັດ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບນະໂຍບາຍການບັນຊີທີ່ນຳໃຊ້. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາ ການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ບໍລິສັດໄດ້ປະຕິບັດຕາມຂໍ້ກຳນົດທີ່ກ່າວມາຂ້າງເທິງ ໃນການກະກຽມເອກະສານລາຍງານການເງິນ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນສຳລັບໄລຍະເວລາຫົກເດືອນຕົ້ນປີສິ້ນສຸດໃນວັນທີ 30 ກັນຍາ 2019 ແມ່ນ ໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິ ບາຍໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນເລກທີ 3.

ຕາງໜ້າຄະນະບໍລິຫານ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫຼີ ສ່ຽວຕົ້ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ຕຸລາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານເງິນການດຳເນີນງານແລະກະແສເງິນ
ສຳລັບໄລຍະ 9 ເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ກັນຍາ 2019

	ສຳລັບໄລຍະ 9 ເດືອນ ສິ້ນສຸດ ວັນທີ 30 ກັນຍາ 2019 ກີບ	*ສຳລັບໄຕມາດ 3 ເດືອນ ສິ້ນສຸດ ວັນທີ 30 ກັນຍາ 2019 ກີບ*
ລາຍຮັບ	20,474,363,466	6,342,009,847
ລາຍຮັບອື່ນໆຈາກການດຳເນີນງານ	2,059,348,437	939,566,571
ລາຍຮັບລວມ	**22,533,711,903**	**7,281,576,418**
ລາຍຈ່າຍຈາກການດຳເນີນງານ	(14,602,184,499)	(4,547,481,070)
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ	2,784,600,000	-
ກຳໄລຈາກການດຳເນີນງານ	**10,716,127,404**	**2,734,095,348**
ລາຍຮັບທາງການເງິນ	189,774,538	134,132,528
ລາຍຈ່າຍທາງການເງິນ	(1,706,887,147)	(582,225,525)
ກຳໄລກ່ອນອາກອນ	**9,199,014,795**	**2,286,002,351**
ລາຍຈ່າຍອາກອນກຳໄລ	(1,747,812,811)	(434,340,447)
ກຳໄລພາຍໃນໄລຍະ	**7,451,201,984**	**1,851,661,904**
ລາຍຮັບອື່ນໆນອກການທຸລະກິດພາຍໃນໄລຍະ, ອາກອນສຸດທິ	-	-
ລວມລາຍຮັບນອກການທຸລະກິດພາຍໃນໄລຍະ, ອາກອນສຸດທິ	**7,451,201,984**	**1,851,661,904**
ລາຍຮັບຕໍ່ຮຸ້ນ		
- ພື້ນຖານ, ກຳໄລພາຍໃນໄລຍະຂອງຜູ້ຖືຮຸ້ນສາມັນ	*62.48*	*N/A*

ກະກຽມໂດຍ:

ທ່ານ ຊິນເພີ ຫູ້
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ໋ງ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ຕຸລາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນສຳລັບ 9 ເດືອນຕົ້ນປີ
ນະວັນທີ 30 ກັນຍາ 2019

	30 ກັນຍາ 2019 *ກີບ*	*31 ທັນວາ 2018* *ກີບ*
ຊັບສິນ		
ຊັບສິນໝຸນວຽນ		
ເງິນສົດ	37,070,169,337	4,144,271,082
ໜີ້ຕ້ອງຮັບການຄ້າ ແລະ ລູກໜີ້ອື່ນໆ	13,050,807,182	8,796,019,145
ຈ່າຍລ່ວງໜ້າສຳລັບຊື້ຊັບສິນຄົງທີ່	23,400,000,000	-
ລວມຍອດຊັບສິນໝຸນວຽນ	**73,520,976,519**	**12,940,290,227**
ຊັບສິນບໍ່ໝຸນວຽນ		
ຊັບສິນເພື່ອການລົງທຶນ	167,459,400,000	164,674,800,000
ລວມຍອດຊັບສິນບໍ່ໝຸນວຽນ	**167,459,400,000**	**164,674,800,000**
ລວມຍອດຊັບສິນ	**240,980,376,519**	**177,615,090,227**
ທຶນ ແລະ ໜີ້ສິນ		
ໜີ້ສິນ		
ໜີ້ສິນໝຸນວຽນ		
ໜີ້ຕ້ອງສົ່ງການຄ້າ ແລະ ເຈົ້າໜີ້ອື່ນໆ	4,686,393,591	2,827,996,983
ສ່ວນປະຈຸບັນຂອງເງິນກູ້ຍືມໄລຍະຍາວ	64,232,500,000	-
ລວມຍອດໜີ້ສິນໝຸນວຽນ	**68,918,893,591**	**2,827,996,983**
ໜີ້ສິນບໍ່ໝຸນວຽນ		
ເງິນກູ້ຍືມໄລຍະຍາວ	-	64,232,500,000
ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະ	4,820,026,089	3,152,429,037
ລວມຍອດໜີ້ສິນບໍ່ໝຸນວຽນ	**4,820,026,089**	**67,384,929,037**
ລວມຍອດໜີ້ສິນ	**73,738,919,680**	**70,212,926,020**
ທຶນ		
ທຶນຈົດທະບຽນທີ່ຖອກແລ້ວ	147,199,900,000	96,000,000,000
ສ່ວນເກີນມູນຄ່າຮຸ້ນ	2,559,995,000	-
ຄັງແຮຕາມລະບຽບການ	1,748,156,184	1,140,216,421
ຄັງແຮເພື່ອຂະຫຍາຍທຸລະກິດ	1,748,156,184	1,140,216,421
ກຳໄລສະສົມ	13,985,249,471	9,121,731,365
ລວມຍອດທຶນ	**167,241,456,839**	**107,402,164,207**
ລວມຍອດໜີ້ສິນ ແລະ ທຶນ	**240,980,376,519**	**177,615,090,227**

ກະກຽມໂດຍ:

ທ່ານ ຊົນເພັຍ ຫຸ້ ຍ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ໋ງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

31 ຕຸລາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ໍາລັບໄລຍະຫົ້າເດືອນສິ້ນສຸດນະ ວັນທີ 30 ກັນຍາ 2019

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ	*ສ່ວນເກີນມູນຄ່າຮຸ້ນ*	*ຄັງແຮຕາມລະບຽບການ*	*ຄັງແຮເພື່ອຂະຫຍາຍທຸລະກິດ*	*ກໍາໄລສະສົມ*	*ລວມທັ້ງໝົດ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2019	**96,000,000,000**	**-**	**1,140,216,421**	**1,140,216,421**	**9,121,731,365**	**107,402,164,207**
ຮັບອອກຈໍາໜ່າຍ	51,199,900,000	2,559,995,000	-	-	-	53,759,895,000
ການດັດແກ້ອາກອນໃນປີທີ່ຜ່ານມາ	-	-	(137,180,435)	(137,180,435)	(1,097,443,482)	(1,371,804,352)
ກໍາໄລສຸດທິພາຍໃນໄລຍະ	-	-	-	-	7,451,201,984	7,451,201,984
ຈັດສັນກໍາໄລເຂົ້າຄັງແຮ	-	-	745,120,198	745,120,198	(1,490,240,396)	0
ຍອດເຫຼືອໃນວັນທີ 30 ກັນຍາ 2019	**147,199,900,000**	**2,559,995,000**	**1,748,156,184**	**1,748,156,184**	**13,985,249,471**	**167,241,456,839**

ກະກຽມໂດຍ:

ທ່ານ ຊິນເພີ ຫຸ້
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອໍານວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

31 ຕຸລາ 2019

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ນະ ວັນທີ 30 ກັນຍາ 2019 ສຳລັບໄລຍະ 9 ເດືອນສິ້ນສຸດ

	ສຳລັບໄລຍະ 9 ເດືອນ ສິ້ນສຸດ ວັນທີ 30 ກັນຍາ 2019 ກີບ
ກິດຈະກຳການດຳເນີນງານ	
ກຳໄລກ່ອນອາກອນ	**9,199,014,795**
ການດັດແກ້ສຳລັບ:	
ກຳໄລຈາກການຕີມູນຄ່າໃນຊັບສິນເພື່ອການລົງທຶນ	(2,784,600,000)
ລາຍຈ່າຍດອກເບ້ຍ	1,704,837,605
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ	**8,119,252,400**
ການເພີ່ມຂຶ້ນຂອງໜີ້ຕ້ອງຮັບ	(29,359,625,641)
ການເພີ່ມຂຶ້ນຂອງໜີ້ຕ້ອງສົ່ງ	1,605,077,070
ອາກອນກຳໄລທີ່ຈ່າຍແລ້ວ	(1,198,700,574)
ກະແສເງິນສົດສຸດທິ(ນຳໃຊ້)/ ຈາກກິດຈະກຳການດຳເນີນງານ	**(20,833,996,745)**
ກິດຈະກຳການລົງທຶນ	
ກະແສເງິນສົດສຸດທິ ຈາກກິດຈະກຳການລົງທຶນ	-
ກິດຈະກຳທາງການເງິນ	
ລາຍຮັບຈາກການອອກ	
- ມູນຄ່າໜ້າໃບ	51,199,900,000
ສ່ວນເກີນມູນຄ່າຮຸ້ນ	2,559,995,000
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ	**53,759,895,000**
ເງິນສົດເພີ່ມຂຶ້ນສຸດທິພາຍໃນໄລຍະ	**32,925,898,255**
ເງິນສົດໃນຕົ້ນ	**4,144,271,082**
ເງິນສົດໃນທ້າຍປີ	**37,070,169,337**

ກະກຽມໂດຍ:

ທ່ານ ຊິນເຟີ ຫູ
ຜູ້ຈັດການຝ່າຍການເງິນ
ນະຄອນຫຼວງວຽງຈັນ, ສປປ ລາວ
31 ຕຸລາ 2019

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company